ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ບົດຂ່າວ

## ພິທີເຊັນສັນຍາ

## ການໃຫ້ບໍລິການທີ່ປຶກສາ ເພື່ອປັບປຸງຂັ້ນຕອນການອະນຸມັດສິນເຊື່ອໄປສູ່ຄວາມທັນສະໄໝໂດຍນຳໃຊ້ລະບົບ Loan Origination System (LOS) ແລະ ສ້າງລະບົບຈັດອັນດັບສິນເຊື່ອ Credit Rating System (CRS)

## ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດ ເອິນ ແອນ ຢັງ ລາວ ຈຳກັດ




ໃນວັນທີ 11 ກັນຍາ 2017 ເວລາ 15:00 ໂມງ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ບໍລິສັດ ເອິນແອນ ຢັງລາວຈຳກັດ ໄດ້ຈັດພິທີເຊັນສັນຍາຮ່ວມກັນ ທີ່ ທຄຕລ ສຳນັກງານໃຫຍ່ ເພື່ອດຳເນີນການປະຕິບັດ "ໂຄງການການໃຫ້ບໍລິການທີ່ປຶກສາເພື່ອປັບປຸງຂັ້ນຕອນການອະນຸມັດສິນເຊື່ອໄປສູ່ຄວາມທັນສະໄໝໂດຍນຳໃຊ້ລະບົບ LOS ແລະ ສ້າງລະບົບຈັດອັນດັບສິນເຊື່ອ CRS" ພາຍໃຕ້ການເປັນທີ່ປຶກສາ ຂອງ ບໍລິສັດ ເອິນແອນຢັງລາວ ຈຳກັດ.

ໃນງານພິທີເຊັນສັນຍາຄັ້ງນີ້ ແມ່ນລົງນາມໂດຍ:

1. ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍໃຫຍ່ ທຄຕລ
2. ທ່ານ ນ. ເຢືອງ ຫງວຽນ, ຜູ້ບໍລິຫານ ບໍລິສັດ ເອິນແອນຢັງລາວ ຈຳກັດ.

ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມໃນຄັ້ງນີ້ ປະກອບມີ:

1. ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການທະນາຄານແຫ່ງ ສ.ປ.ປ. ລາວ
2. ທ່ານ ນາງ ນະຄອນສີ ມະໂນທຳ, ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ

ພ້ອມດ້ວຍ ຄະນະອຳນວຍການ, ຄະນະພະແນກ, ຄະນະສາຂາ, ວິຊາການທີ່ກ່ຽວຂ້ອງຂອງ ທຄຕລ ແລະ ທີມງານຈາກ ບໍລິສັດ ເອິນແອນຢັງລາວ ຈຳກັດ.

ສັນຍາໂຄງການປັບປຸງຂັ້ນຕອນການອະນຸມັດສິນເຊື່ອໃຫ້ທັນສະໄໝໂດຍນຳໃຊ້ລະບົບ LOS ແລະ ສ້າງລະບົບຈັດອັນດັບສິນເຊື່ອ CRS ແມ່ນຈະດຳເນີນເປັນເວລາ **18 ເດືອນ** ພາຍຫຼັງເຊັນສັນຍາ. ໂຄງການດັ່ງກ່າວແມ່ນໄດ້ກວມເອົາຫລາຍໜ້າວຽກທີ່ຈະຕ້ອງໄດ້ປະຕິບັດຮ່ວມກັນຄື: ດຳເນີນການປະເມີນຄວາມພ້ອມ, ທົບທວນຄືນສະຖານະປະຈຸບັນຂອງ ທຄຕລ, ລະບຸຊ່ອງວ່າງທີ່ຈະຕ້ອງປັບປຸງເພື່ອນຳໃຊ້ລະບົບ LOS ແລະ ລະບົບ CRS, ແນະນຳເພື່ອຍົກລະດັບຂັ້ນຕອນການອະນຸມັດສິນເຊື່ອໃຫ້ສອດຄ່ອງກັບການປະຕິບັດຂອງບັນດາທະນາຄານຊັ້ນນຳໃນທົ່ວໂລກ, ໂດຍ ບໍລິສັດ ເອິນ ແອນ ຢັງ ລາວ ຈຳກັດ ຈະແນະນຳບັນດາຜູ້ສະໜອງລະບົບ LOS ໃຫ້ ທຄຕລ ຄັດເລືອກ ແລະ ແນະນຳສ້າງລະບົບ CRS ເພື່ອໃຫ້ລະບົບມີຄວາມຄົບຖ້ວນສົມບູນທີ່ສຸດ.




**ທ່ານ ພູຂົງ ຈັນທະຈັກ**, ຜູ້ອຳນວຍການໃຫຍ່, ທຄຕລ ໄດ້ກ່າວໃນພິທີເຊັນສັນຍາວ່າ: ການທີ່ ທຄຕລ ມີການປັບປຸງຂັ້ນຕອນການອະນຸມັດສິນເຊື່ອໄປສູ່ຄວາມທັນສະໄໝໂດຍນຳໃຊ້ລະບົບ LOS ເຂົ້າມາຊ່ວຍ ແລະ ສ້າງລະບົບຈັດອັນດັບສິນເຊື່ອ **CRS** ແມ່ນຈະນຳເອົາຈຸດດີຫລາຍຢ່າງມາສູ່ທະນາຄານ ໂດຍແນໃສ່ເພື່ອຍົກລະດັບຂັ້ນຕອນການເຮັດວຽກຂອງວຽກງານສິນເຊື່ອ ເຊິ່ງຖືໄດ້ວ່າເປັນຫົວໃຈຫຼັກໃນການດຳເນີນທຸລະກິດທະນາຄານ ຈະດຳເນີນໄປບົນພື້ນຖານການຄຳນຶງເຖິງຜົນປະໂຫຍດຫຼັກໃນວຽກງານສິນເຊື່ອຂອງທະນາຄານ 3 ຢ່າງ ຄື:

**❶ ໄວກວ່າ (Faster), ❷ ຖືກກວ່າ (Cheaper), ❸ ດີກວ່າ (Better)**

1. **ໄວກວ່າ =** ສາມາດອະນຸມັດສິນເຊື່ອໄດ້ຢ່າງວ່ອງໄວ ເພາະໄດ້ນຳໃຊ້ລະບົບການອະນຸມັດ ສິນເຊື່ອທີ່ທັນສະໄໝເຂົ້າມາຊ່ວຍໃນຂັ້ນຕອນການອະນຸມັດສິນເຊື່ອ, ຫຼຸດຜ່ອນຂັ້ນຕອນການເຮັດວຽກໃຫ້ສັ້ນລົງ.
2. **ຖືກກວ່າ =** ຫຼຸດຜ່ອນຕົ້ນທຶນຂອງທະນາຄານໃນການນຳໃຊ້ບຸກຄະລາກອນ ແລະ ເອກະສານຫຼາຍເກີນຄວາມຈຳເປັນດ້ວຍການໝູນໃຊ້ລະບົບເຂົ້າມາຊ່ວຍໃນຂັ້ນຕອນການອະນຸມັດສິນເຊື່ອຫຼາຍຂຶ້ນ.
3. **ດີກວ່າ =** ສາມາດອະນຸມັດສິນເຊື່ອໄດ້ຢ່າງມີຄຸນະພາບ, ຫຼຸດຜ່ອນຄວາມຜິດພາດໃນຂັ້ນຕອນການພິຈາລະນາອະນຸມັດສິນເຊື່ອ, ສາມາດຄຸ້ມຄອງບັນດາຄວາມສ່ຽງຕ່າງໆໃນວຽກງານສິນເຊື່ອໄດ້ຢ່າງມີປະສິດທິພາບ ແລະ ໃກ້ຄຽງກັບມາດຕະຖານສາກົນ.

ພ້ອມກັນນີ້ໃນພິທີ, ທ່ານ ນາງ ເຢືອງ ຫງວຽນ, ຜູ້ບໍລິຫານ ບໍລິສັດ ເອີນແອນຢັງລາວ ຈຳກັດ ໄດ້ສະແດງຄວາມຍິນດີກັບ ທຄຕລ ໃນການຈັດຕັ້ງປະຕິບັດໂຄງການນີ້ ແລະ ທ່ານຍັງໄດ້ໃຫ້ຄຳເຫັນເພີ່ມຕື່ມວ່າ ລະບົບ LOS ບໍ່ພຽງແຕ່ສາມາດຫຼຸດພາລະດ້ານເອກະສານເທົ່ານັ້ນ, ລະບົບດັ່ງກ່າວຍັງຍົກລະດັບການເຮັດວຽກແບບອັດຕະໂນມັດໃນການຄວບຄຸມ ແລະ ການລາຍງານ, ອຳນວຍຄວາມສະດວກໃຫ້ແກ່ການສື່ສານທີ່ມີປະສິດທິຜົນໃນຂະບວນການສິນເຊື່ອ, ບໍລິຫານຂໍ້ມູນ ແລະ ຄຸ້ມຄອງຄວາມສ່ຽງແບບລວມສູນ ແລະ ເພີ່ມຄວາມສາມາດໃນການຂັບເຄື່ອນ ແລະ ນຳມາເຊິ່ງປະສົບການທີ່ສຸດຍອດມາໃຫ້ກັບ ທະນາຄານ ແລະ ລູກຄ້າຂອງທະນາຄານ. ໃນອີກດ້ານໜຶ່ງ, ລະບົບ CRS ສາມາດຊ່ວຍໃນການປັບປຸງຄຸນນະພາບຂອງການວິເຄາະສິນເຊື່ອ ແລະ ຄຸ້ມຄອງຄວາມສ່ຽງ ໂດຍການປະເມີນຄວາມໜ້າເຊື່ອຖືຂອງລູກຄ້າທີ່ໄວຂຶ້ນ ແລະ ຖືກຕ້ອງຂຶ້ນ ດັ່ງນັ້ນການຕັດສິນໃຈທາງດ້ານທຸລະກິດ ແລະ ມາດຕະການການຄຸ້ມຄອງຄວາມສ່ຽງສາມາດຖືກສ້າງ ແລະ ຈັດຕັ້ງປະຕິບັດຢ່າງສອດຄ່ອງ. ການປະເມີນດັ່ງກ່າວຍັງສາມາດເປັນພື້ນຖານສຳລັບການຍົກລະດັບການລິເລີ່ມອື່ນໆທີ່ສຳຄັນໃນອະນາຄົດ ເຊັ່ນ ການຕັ້ງລາຄາຕາມຄວາມສ່ຽງ, ການສ້າງຮູບແບບຈຳລອງຄວາມສ່ຽງສິນເຊື່ອ, ການສ້າງເງິນແຮຄວາມສ່ຽງສິນເຊື່ອ ແລະ ການຄິດໄລ່ທຶນ, ການປະຕິບັດຕາມບາເຊວ II, ບໍລິຫານຄັງເງິນກູ້ໃຫ້ເກີດປະໂຫຍດສູງສຸດ, ມາດຖານສາກົນດ້ານການລາຍງານການເງິນ (IFRS) ແລະ ອື່ນໆ ອີກຫຼາຍຢ່າງ.

ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ ເຊື່ອວ່າຜົນສຳເລັດຂອງໂຄງການນີ້ຈະເປັນຈຸດປ່ຽນທີ່ສຳຄັນສຳລັບ ທຄຕລ ໃນການບັນລຸວິໄສທັດທາງທຸລະກິດໃນອະນາຄົດ ແລະ ຮັກສາຕຳແໜ່ງທະນາຄານແນວໜ້າໃນຕະຫຼາດລາວ.